ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0448 /ຫອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 18 ກຸມພາ 2014

## ແຈ້ງການ

ເຖິງ: ບັນດາຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ.

ເລື່ອງ: ຊຸກຍູ້, ສົ່ງເສີມ ໃຫ້ບັນດາຫົວໜ່ວຍທຸລະກິດ ແລະ ຫ້າງຮ້ານຕ່າງໆ ນຳໃຊ້ເງິນກີບ.

- ອີງຕາມ ລັດຖະບັນຍັດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ, ສະບັບເລກທີ 01/ປປທ, ລົງວັນທີ 17/3/2008 ແລະ ບົດແນະນຳ ສະບັບເລກທີ 02/ທຫລ, ລົງວັນທີ 2/4/2010;
- ອີງຕາມ ດຳລັດຂອງສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 150/ນຍ, ລົງວັນທີ 18/05/2007, ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ນຳໃຊ້ເງິນກີບ;
- ອີງຕາມ ດຳລັດ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ
- ອີງຕາມ ດຳລັດ ເລກທີ 508/ລບ, ລົງວັນທີ 04/12/2012, ວ່າດ້ວຍການກວດກາການຄ້າ;

ເພື່ອເປັນການຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາ ແລະ ເສດຖະກິດຂອງປະເທດ, ທັງເປັນການເຊີດຊູນ້ຳໃຈຮັກຊາດ ແລະ ຄວາມເປັນເອກະລາດ, ເປັນເຈົ້າຕົນເອງທາງດ້ານເສດຖະກິດເທື່ອລະກ້າວ. ແນໃສ່ຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ ເພື່ອຍົກສູງຄຸນຄ່າເງິນຕາຂອງຊາດດ້ວຍການຈຳກັດ ແລະ ກ້າວໄປເຖິງຢຸດຕິການນຳໃຊ້ເງິນຕາຕ່າງປະເທດຢ່າງຊະຊາຍ ແລະ ການເອົາປຽບທາງດ້ານລາຄາສິນຄ້າ ແລະ ຄ່າບໍລິການຢູ່ພາຍໃນປະເທດເຮົາ.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ປະຕິບັດດັ່ງນີ້:

1. ໃຫ້ອອກແຈ້ງການເຖິງຜູ້ປະກອບການ, ນັກທຸລະກິດ, ຊາວຄ້າຂາຍ ແລະ ພໍ່ແມ່ປະຊາຊົນ ໃນຂອບເຂດທ້ອງຖິ່ນຂອງຕົນ ເພື່ອປຸກລະດົມໃຫ້ໂຄສະນາ, ຊື້-ຂາຍ, ຕິດລາຄາສິນຄ້າ ແລະ ຄ່າບໍລິການ ໃນ ສປປ ລາວ ເປັນເງິນກີບ, ຍົກເວັ້ນແຕ່ປະເພດສິນຄ້າ ແລະ ການບໍລິການທີ່ໄດ້ຮັບອະນຸຍາດໃຫ້ຊຳລະເປັນເງິນຕາຕ່າງປະເທດເທົ່ານັ້ນ;
2. ມອບໃຫ້ເຈົ້າໜ້າທີ່ກວດກາການຄ້າໃນແຕ່ລະແຂວງ ແລະ ແຕ່ລະເມືອງ ເປັນຜູ້ຕິດຕາມກວດກາການໂຄສະນາ, ການຊື້-ຂາຍ, ການຕິດລາຄາສິນຄ້າ ແລະ ຄ່າບໍລິການເປັນເງິນກີບນີ້ ຢ່າງເປັນປົກກະຕິ;

3. ໃນກໍລະນີ ເຈົ້າໜ້າທີ່ກວດກາການຄ້າ ຫຼື ເຈົ້າໜ້າທີ່ອື່ນໆທີ່ກ່ຽວຂ້ອງ ຫາກພົບເຫັນບັນດາຜູ້ປະກອບການ, ຫົວໜ່ວຍທຸລະກິດ, ຫ້າງຮ້ານ ແລະ ຊາວຄ້າຂາຍຕ່າງໆໂຄສະນາ, ຕິດລາຄາສິນຄ້າ ແລະ ຄ່າບໍລິການ ຫຼື ຊໍາລະເປັນເງິນຕາຕ່າງປະເທດ, ຜູ້ລະເມີດຈະຖືກປະຕິບັດມາດຕະການປັບໃໝ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງຕາມແຕ່ລະກໍລະນີ;

4. ໃຫ້ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນຂັ້ນທ້ອງຖິ່ນຂອງຕົນ ເພື່ອພ້ອມກັນຈັດຕັ້ງປະຕິບັດ ບົນພື້ນຖານຄວາມເປັນເອກະພາບ ແລະ ປະຕິບັດຕາມພາລະບົດບາດຂອງໃຜລາວ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບດັ່ງກ່າວນີ້ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ,

ບຸນມີ ມະນີວົງ

<u>ບ່ອນນໍາສົ່ງ:</u>

- ຫ້ອງວ່າການລັດຖະບານ (ເພື່ອລາຍງານ);
- ທ່ານ ລມຕ ວ່າການ, ກະຊວງ ອຄ (ເພື່ອລາຍງານ);
- ທ່ານ ລມຕ ຊ່ວຍວ່າການ, ກະຊວງ ອຄ (ເພື່ອລາຍງານ);
- ທະນາຄານ ແຫ່ງ ສປປ ລາວ (ເພື່ອຊາບ ແລະ ຮ່ວມມື);
- ກະຊວງປ້ອງກັນຄວາມສະຫງົບ (ເພື່ອຮ່ວມມື);
- ກົມການຄ້າພາຍໃນ (ເພື່ອຕິດຕາມ);
- ສໍາເນົາ 01 ສະບັບ.